ທ່ານສາມາດຍື່ນໄດ້ທາງອອນລາຍ, ທາງໂທລະສັບ, ຫຼື ທາງໄປສະນີ (ເບິ່ງໜ້າຫຼັງຂອງຟອມນີ້ສຳລັບຂໍ້ມູນຕິດຕໍ່)

ເມືອງພອດແລນ
ກົມເກັບລາຍຮັບ

FORM **ARTS 2022**

# ແບບຟອມສະແດງພາສີລາຍໄດ້ເພື່ອສິລະປະ

*ກອງທຶນເພື່ອສິລະປະ ການສຶກສາ ແລະການເຂົ້າເຖິງ*

**ສຳລັບປີຕັ້ງແຕ່ວັນທີ 1 ມັງກອນ ຫາ 31 ທັນວາ 2022**
**ກຳນົດວັນທີ 18 ເມສາ 2023**

ສຳລັບເຈົ້າໜ້າທີ່ເທົ່ານັ້ນ

**ບັນດາຜູ້ຢູ່ອາໄສໃນພອດແລນທີ່ເປັນຜູ້ໃຫຍ່ທຸກຄົນ (ອາຍຸ 18 ປີຂຶ້ນໄປ) ຕ້ອງໄດ້ຍື່ນເສັຍພາສີ Arts Tax.**

❶ ທີ່ຢູ່ໃນພອດແລນ ຊຶ່ງເຄີຍເປັນທີ່ຢູ່ຫຼັກຂອງຜູ້ຍື່ນພາສີໃນຊ່ວງເວລາໃດໜຶ່ງຂອງປີ 2022.

☐ **ໄດ້ຍ້າຍແມ່ນບໍ່?** ໝາຍຕິກໃສ່ແລະຕື່ມຂໍ້ມູນໃສ່ຕາຕະລາງ B ຢູ່ໜ້າຫຼັງຂອງຟອມ

| ທີ່ຢູ່ (ຫ້າມໃຊ້ທີ່ຢູ່ຕູ້ ປ.ນ.) | ເມືອງ | ຣັຖ | ລະຫັດໄປສະນີ |
|---|---|---|---|
| | | OR | 97 |

❷ ຄົວເຮືອນມີເງື່ອນໄຂໄດ້ຮັບການຍົກເວັ້ນສຳລັບຄວາມທຸກຍາກຂອງຄົວເຮືອນບໍ່? ☐ ແມ່ນ (ຕື່ມໃສ່ຕາຕະລາງ A ຢູ່ໜ້າຫຼັງຂອງຟອມ) ☐ ບໍ່

❸ ທຸກຄົນທີ່ມີອາຍຸ 18 ປີຂຶ້ນໄປນັບແຕ່ວັນທີ 31 ທັນວາ 2022. (ປະກອບໃສ່ພາກນີ້ພຽງແຕ່ຖ້າທ່ານບໍ່ໄດ້ຍື່ນຂໍເອົາການຍົກເວັ້ນສຳລັບຄວາມທຸກຍາກຂອງຄົວເຮືອນ.)

| ຊື່ (ຊື່, ຊື່ກາງ, ນາມສະກຸນ, ຄຳຕໍ່ທ້າຍ) ☐ ເສັຽຊີວິດ | ປີເກີດ | ໝາຍຕິກໃສ່ຂໍ້ດຽວ: |
|---|---|---|
| ອີເມວ | ເລກປະກັນສັງຄົມ | ☐ **ກຳນົດຊຳລະ $35**<br>☐ ລາຍໄດ້ປະຈຳປີທີ່ຕ້ອງເສັຽພາສີຕ່ຳກວ່າ $1,000 |
| ຊື່ (ຊື່, ຊື່ກາງ, ນາມສະກຸນ, ຄຳຕໍ່ທ້າຍ) ☐ ເສັຽຊີວິດ | ປີເກີດ | ໝາຍຕິກໃສ່ຂໍ້ດຽວ: |
| ອີເມວ | ເລກປະກັນສັງຄົມ | ☐ **ກຳນົດຊຳລະ $35**<br>☐ ລາຍໄດ້ປະຈຳປີທີ່ຕ້ອງເສັຽພາສີຕ່ຳກວ່າ $1,000 |
| ຊື່ (ຊື່, ຊື່ກາງ, ນາມສະກຸນ, ຄຳຕໍ່ທ້າຍ) ☐ ເສັຽຊີວິດ | ປີເກີດ | ໝາຍຕິກໃສ່ຂໍ້ດຽວ: |
| ອີເມວ | ເລກປະກັນສັງຄົມ | ☐ **ກຳນົດຊຳລະ $35**<br>☐ ລາຍໄດ້ປະຈຳປີທີ່ຕ້ອງເສັຽພາສີຕ່ຳກວ່າ $1,000 |
| ຊື່ (ຊື່, ຊື່ກາງ, ນາມສະກຸນ, ຄຳຕໍ່ທ້າຍ) ☐ ເສັຽຊີວິດ | ປີເກີດ | ໝາຍຕິກໃສ່ຂໍ້ດຽວ: |
| ອີເມວ | ເລກປະກັນສັງຄົມ | ☐ **ກຳນົດຊຳລະ $35**<br>☐ ລາຍໄດ້ປະຈຳປີທີ່ຕ້ອງເສັຽພາສີຕ່ຳກວ່າ $1,000 |

❹ ຄິດໄລ່ຍອດຄົງເຫຼືອທີ່ຕ້ອງຊຳລະ. (*ກະລຸນາຮັບຮູ້ວ່າ: ຈະມີການຄິດຄ່າປັບ ຖ້າວ່າ ການຊຳລະເງິນນັ້ນບໍ່ຖືກຕີກາປະທັບໄປສະນີພາຍໃນວັນທີ* 18 ເມສາ 2022.)

**ຍອດຊຳລະຄົງເຫຼືອ:** ຈຳນວນບຸກຄົນທີ່ຕ້ອງຊຳລະ $35: __________ **x $35 =** ພາສີເພື່ອການສຶກສາ ແລະສິລະປະ $____________ ເລກເຊັກ #: ___________

*ຕົວຢ່າງຈຳນວນເງິນທີ່ຕ້ອງຊຳລະ: 1 ຄົນ = $35; 2 ຄົນ = $70; 3 ຄົນ = $105; 4 ຄົນ = $140* **ຂຽນເຊັກສັ່ງຈ່າຍໃຫ້ແກ່ "ເມືອງພອດແລນ"**

❺ ທີ່ຢູ່ທາງໄປສະນີ, ຖ້າວ່າ ແຕກຕ່າງຈາກທີ່ຢູ່ຫຼັກໃນແຖວທີ ❶

| ທີ່ຢູ່ (ໃຊ້ທີ່ຢູ່ຕູ້ ປ.ນ.ກໍໄດ້) | ເມືອງ | ຣັຖ | ລະຫັດໄປສະນີ |
|---|---|---|---|
| | | | |

❻ ໃຫ້ຂໍ້ມູນສຳລັບຕິດຕໍ່ຂ້າງລຸ່ມນີ້ ແລະສົ່ງຟອມນີ້ທາງໄປສະນີພ້ອມກັບເງິນທີ່ຕ້ອງຊຳລະ (ຖ້າວ່າມີ) ໃຫ້ແກ່ກົມເກັບລາຍຮັບ.

ຊື່ຂອງຜູ້ຈັດຕຽມ (ຕົວພິມໃຫຍ່) ________ ວັນທີ ________ ເບີໂທລະສັບຍາມກາງເວັນ ________

**ສົ່ງໄປສະ** Portland Revenue Division - Arts Tax, PO Box 2820, Portland OR 97208-2820 (ເບິ່ງດ້ານຫຼັງສຳລັບເບີໂທລະສັບແລະຂໍ້ມູນຕິດຕໍ່ທາງອອນລາຍ.)

*ການເປີດເຜີຍເລກປະກັນສັງຄົມຂອງທ່ານແມ່ນຈຳເປັນ. ຂໍ້ກຳນົດນີ້ແມ່ນໄດ້ຮັບອະນຸຍາດພາຍໃຕ້ກົດໝາຍວ່າດ້ວຍຄວາມເປັນສ່ວນຕົວຂອງຣັຖບານກາງ (Federal Privacy Act of 1974), ກົດໝາຍປະຕິຮູບພາສີ (Tax Reform Act of 1976) ແລະກົດລະບຽບການບໍລິຫານພາສີເພື່ອສິລະປະ (Arts Tax Administrative Rules). ກົມເກັບລາຍຮັບຈະນຳໃຊ້ເລກປະກັນສັງຄົມຂອງທ່ານ ເພື່ອຊ່ວຍໃນການບໍລິຫານຈັດການພາສີ Arts Tax ຊຶ່ງລວມເຖິງ, ແຕ່ບໍ່ຈຳກັດຢູ່ແຕ່, ການປະຕິບັດຕາມຂໍ້ກຳນົດໃນການຍື່ນພາສີຂອງຣັຖບານກາງ Form 1099 ແລະການປຽບທຽບການຍື່ນພາສີ Arts Tax ກັບຂໍ້ມູນຜູ້ຍື່ນພາສີຂອງຣັຖບານກາງ.*

## ຕາຕະລາງ A: ການຍົກເວັ້ນສຳລັບຄວາມທຸກຍາກຂອງຄົວເຮືອນ (ເບິ່ງຄຳແນະນຳ)

**ຕື່ມຍອດລວມລາຍໄດ້ປະຈຳປີ (ຈາກທຸກແຫຼ່ງ) ສຳລັບແຕ່ລະຄົນໃນຄົວເຮືອນຂ້າງລຸ່ມນີ້, ລວມເຖິງ ເດັກນ້ອຍ.**

| | ຊື່ (ຖ້າວ່າ ເສັຽຊີວິດ, ໝາຍໃສ່ກ່ອງທີ່ຢູ່ຕິດກັບຊື່) | ປີເກີດ | SSN | ລາຍໄດ້ປະຈຳປີ |
|---|---|---|---|---|
| 1 | ☐ | | - - | $ |
| 2 | ☐ | | - - | $ |
| 3 | ☐ | | - - | $ |
| 4 | ☐ | | - - | $ |
| 5 | ☐ | | - - | $ |
| 6 | ☐ | | - - | $ |
| 7 | ☐ | | - - | $ |
| 8 | ☐ | | - - | $ |

| ເກນຄວາມທຸກຍາກຂອງຣັຖບານກາງປະຈຳປີ 2022 | |
|---|---|
| **ຈຳນວນຄົນໃນຄົວເຮືອນ** | **ເກນຄວາມທຸກຍາກ** |
| **1** | **$13,590** |
| **2** | **$18,310** |
| **3** | **$23,030** |
| **4** | **$27,750** |
| **5** | **$32,470** |
| **6** | **$37,190** |
| **7** | **$41,910** |
| **8** | **$46,630** |

**ສຳລັບຄົວເຮືອນທີ່ມີຫຼາຍກວ່າ 8 ຄົນ, ເພີ່ມ $4,720 ສຳລັບແຕ່ລະຄົນທີ່ເພີ່ມເຂົ້າມາ.**

*ຖ້າວ່າ ມີຫຼາຍຄົນໃນຄົວເຮືອນ, ຈົ່ງຄັດຕິດເຈັ້ຽເພີ່ມເຕີມສຳລັບແຕ່ລະຄົນ ໂດຍບອກຊື່ ແລະປີເກີດ ແລະຕື່ມຍອດລວມລາຍໄດ້ບ່ອນນີ້: :* $________

ລາຍໄດ້ລວມປະຈຳປີຂອງຄົວເຮືອນ: $

ຈຳນວນຄົວໃນຄົວເຮືອນ:

__ເປັນທາງເລືອກ__: ໂດຍການເຊັນຊື່ໃສ່ລຸ່ມນີ້, ຂ້າພະເຈົ້າອະນຸຍາດໃຫ້ເປີດເຜີຍຂໍ້ມູນຕິດຕໍ່ຂອງຂ້າພະເຈົ້າ ແລະສະຖານະການຍົກເວັ້ນສຳລັບຄວາມທຸກຍາກ ໃຫ້ແກ່ອົງການອື່ນໆຂອງຣັຖບານ ແລະອົງການທີ່ບໍ່ສະແຫວງຫາຜົນກຳໄລຕ່າງໆ ເພື່ອຈຸດປະສົງໃນການຊ່ວຍໃຫ້ມີຄຸນສົມບັດເໝາະສົມສຳລັບການຊ່ວຍເຫຼືອຜູ້ມີລາຍໄດ້ຕ່ຳ. (ເຊັນຊື່ໃສ່ແຖວລຸ່ມນີ້.)

| ລາຍເຊັນ | ຊື່ຕົວພິມໃຫຍ່ | ເບີໂທລະສັບ | ທີ່ຢູ່ອີເມວ |
|---|---|---|---|
| | | | |

**ຢ່າລືມຕື່ມໃສ່ແຖວທີ ❺ ແລະ ❻ ຢູ່ດ້ານໜ້າຂອງຟອມ.**

## ຕາຕະລາງ B: ການປ່ຽນທີ່ຢູ່ (ເບິ່ງຄຳແນະນຳ)

| ຊື່ | ທີ່ຢູ່ | ເມືອງ | ຣັຖ | ລະຫັດໄປສະນີ | ວັນທີຍ້າຍ (ດດ/ປປ) |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |

**ຍື່ນທາງໄປສະນີ Portland Revenue Division - Arts Tax, PO Box 2820, Portland OR 97208-2820**

**ຍື່ນທາງໂທລະສັບ:** (503) 865-4278

ແຟກຊ໌(503) 865-3065

TTY: (503) 823-6868

**ຍື່ນທາງອອນລາຍ**: Pro.Portland.gov

ຢູ່ສະຖານທີ່Revenue Division, 111 SW Columbia Street, Suite 600, Portland, Oregon, 97201

**ຂຽນເຊັກສັ່ງຈ່າຍໃຫ້ແກ່ "City of Portland"**

# 2022 Arts Tax ຄຳແນະນຳສຳລັບການຍື່ນພາສີ

| ເກນຄວາມທຸກຍາກຂອງຣັຖບານກາງປະຈຳປີ 2022 | |
|---|---|
| ຈຳນວນຄົນໃນຄົວເຮືອນ | ເກນຄວາມທຸກຍາກ |
| 1 | $13,590 |
| 2 | $18,310 |
| 3 | $23,030 |
| 4 | $27,750 |
| 5 | $32,470 |
| 6 | $37,190 |
| 7 | $41,910 |
| 8 | $46,630 |
| ສຳລັບຄົວເຮືອນທີ່ມີຫຼາຍກວ່າ 8 ຄົນ, ເພີ່ມ $4,720 ສຳລັບແຕ່ລະຄົນທີ່ເພີ່ມເຂົ້າມາ. | |

❶ ໃສ່ທີ່ຢູ່ປັດຈຸບັນໃນພອດແລນ ຫຼື ທີ່ຢູ່ພອດແລນທີ່ເຄີຍເປັນທີ່ຢູ່ຫຼັກຂອງຜູ້ຍື່ນພາສີໃນລະຫວ່າງຊ່ວງເວລາໃດໜຶ່ງຂອງປີ 2022. ຢ່າປະກອບຟອມນີ້ ຖ້າວ່າ ບ່ອນຢູ່ອາໄສບໍ່ແມ່ນ/ບໍ່ໄດ້ຢູ່ພາຍໃນເຂດເມືອງພອດແລນ.

- **ຖ້າວ່າ ຜູ້ຍື່ນພາສີໄດ້ຍ້າຍອອກຈາກບ່ອນຢູ່ອາໄສຫຼັກເມື່ອບໍ່ດົນມານີ້**, ໝາຍຕິກໃສ່ "ຍ້າຍແລ້ວບໍ່? ໝາຍຕິກໃສ່ແລະຕື່ມຂໍ້ມູນໃສ່ຕາຕະລາງ B ຢູ່ໜ້າຫຼັງຂອງຟອມ." ບອກຊື່ຜູ້ຍື່ນພາສີແຕ່ລະຄົນ ພ້ອມກັບທີ່ຢູ່ໃໝ່ຂອງເຂົາເຈົ້າໃນ **ຕາຕະລາງ B** ພ້ອມກັບວັນທີຍ້າຍ (ເດືອນ/ປີ).

  *ຜູ້ຢູ່ອາໄສໃນພອດແລນບໍ່ເຕັມປີຕິດຄ້າງພາສີເຕັມ $35. ຖ້າວ່າ ທ່ານບໍ່ແມ່ນຜູ້ຢູ່ອາໄສໃນພອດແລນເລີຍໃນປີ 2022, ທ່ານກໍບໍ່ຕ້ອງຮັບຜິດຊອບຈ່າຍພາສີ. ກະລຸນາຕື່ມຂໍ້ມູນໃສ່ຕາຕະລາງ B ແລະສົ່ງຟອມກັບຄືນເພື່ອພວກເຮົາຈະສາມາດປັບປຸງຂໍ້ມູນທີ່ຢູ່ຂອງທ່ານໃໝ່ໃນບັນທຶກຂອງພວກເຮົາ.*

❷ ຖ້າວ່າ *ລາຍໄດ້ປະຈຳປີ*[1] ລວມກັນໝົດ*ທຸກຄົນໃນຄົວເຮືອນ*[2] ແມ່ນຢູ່ທີ່ ຫຼື ຕໍ່າກວ່າເກນຄວາມທຸກຍາກຂອງຣັຖບານກາງ (ເບິ່ງຕາຕະລາງ), ແລະທ່ານປາດຖະໜາທີ່ຈະອ້າງເອົາການຍົກເວັ້ນສຳລັບຄວາມທຸກຍາກຂອງຄົວເຮືອນ, ກໍຈົ່ງໝາຍຕິກໃສ່ "ແມ່ນ" ໃນແຖວທີ ❷. ຖ້າບໍ່ດັ່ງນັ້ນ, ກໍໝາຍໃສ່ "ບໍ່".

**❸ ຖ້າຂໍເອົາການຍົກເວັ້ນຄວາມທຸກຍາກຂອງຄົວເຮືອນ (ທ່ານໄດ້ໝາຍຕິກໃສ່ "ແມ່ນ" ໃນແຖວທີ ❷):**

- ຕື່ມໃສ່ **ຕາຕະລາງ A** ຢູ່ *ໜ້າຫຼັງ* ຂອງຟອມ. (ຢ່າຕື່ມໃສ່ພາກສ່ວນທີ ❸ ຢູ່ດ້ານໜ້າຂອງຟອມ.)
  ບອກຊື່, ປີເກີດ, ເລກປະກັນສັງຄົມ (SSN) ແລະລາຍໄດ້ປະຈຳປີຂອງບຸກຄົນ[1] ສຳລັບແຕ່ລະ*ຄົນໃນຄົວເຮືອນ*[2] (ລວມເຖິງ ເດັກນ້ອຍ) ສຳລັບປີປະຕິທິນ 2022. ຄິດໄລ່ຍອດລວມລາຍໄດ້ປະຈຳປີຂອງສະມາຊິກໃນຄົວເຮືອນ ແລະຕື່ມຈຳນວນຄົນໃນຄົວເຮືອນ. ຂໍ້ມູນລາຍໄດ້ແລະຄົວເຮືອນຈະຖືກກວດສອບໂດຍການນຳໃຊ້ຂໍ້ມູນພາສີຂອງຣັຖບານກາງ.

  *ເປັນທາງເລືອກ: ໃນຖານະເປັນຫົວໜ້າຄົວເຮືອນ ທ່ານສາມາດເລືອກທີ່ຈະແບ່ງປັນຂໍ້ມູນສະຖານະການຍົກເວັ້ນສຳລັບຄວາມທຸກຍາກ ແລະຂໍ້ມູນຕິດຕໍ່ຂອງທ່ານໄດ້ ເພື່ອໃຫ້ມີຄຸນສົມບັດເໝາະສົມສຳລັບການຊ່ວຍເຫຼືອສຳລັບຜູ້ມີລາຍໄດ້ຕໍ່າ.*

- ຢ່າລືມຕື່ມຂໍ້ມູນໃສ່ແຖວທີ ❺ ແລະ ❻.

**ຖ້າວ່າ ທ່ານບໍ່ໄດ້ອ້າງການຍົກເວັ້ນສຳລັບຄວາມທຸກຍາກຂອງຄົວເຮືອນ (ທ່ານໄດ້ໝາຍໃສ່ "ບໍ່ແມ່ນ" ໃນແຖວທີ ❷)**:

- ບອກຊື່ເຕັມ, ເລກປະກັນສັງຄົມ, ປີເກີດ, ແລະທີ່ຢູ່ອີເມວຂອງຜູ້ໃຫຍ່ທີ່ມີອາຍຸ 18 ປີຂຶ້ນໄປນັບຕັ້ງແຕ່ວັນທີ 31 ທັນວາ 2022 (ຄັດຕິດເອກະສານເພີ່ມເຕີມ ຖ້າວ່າຈຳເປັນ).
- ໝາຍຕິກໃສ່ "ລາຍໄດ້ປະຈຳປີທີ່ຕ້ອງເສັຽພາສີຕໍ່າກວ່າ $1,000" ຖ້າວ່າ ບຸກຄົນມີ *ລາຍໄດ້ທີ່ຕ້ອງເສັຽພາສີ*[3] $0 ຫາ $999.99 ສຳລັບປີປະຕິທິນ 2022. ລາຍໄດ້ຈະຖືກກວດສອບໂດຍການນຳໃຊ້ຂໍ້ມູນພາສີຂອງຣັຖບານກາງ.
- ໝາຍໃສ່ "ກຳນົດຊຳລະ $35" ຖ້າວ່າ ບຸກຄົນມີ*ລາຍໄດ້ທີ່ຕ້ອງເສັຽພາສີ*[3] ຢ່າງໜ້ອຍ $1,000 ສຳລັບປີປະຕິທິນ 2022.

❹ ຍອດລວມຈຳນວນພາສີທີ່ຕ້ອງຊຳລະເທົ່າກັບ $35 ຄູນໃຫ້ຈຳນວນຜູ້ຍື່ນພາສີທີ່ເປັນຜູ້ໃຫຍ່ທີ່ໝາຍໃສ່ "ພາສີທີ່ຕ້ອງຊຳລະ $35". ຂຽນເຊັກສັ່ງຈ່າຍໃຫ້ແກ່ **City of Portland**. ຈະມີຄ່າປັບ ຖ້າວ່າ ການຊຳລະເງິນບໍ່ຖືກຕີກາປະທັບໄປສະນີພາຍໃນວັນທີ 18 ເມສາ 2023.

❺ ໃສ່ທີ່ຢູ່ທາງໄປສະນີ ຖ້າວ່າ ແຕກຕ່າງຈາກທີ່ຢູ່ໃນພອດແລນ ທີ່ຂຽນໃສ່ໃນແຖວທີ ❶.

❻ ໃສ່ຊື່ຂອງຜູ້ຈັດຕຽມ, ເບີໂທລະສັບຍາມກາງເວັນ, ແລະວັນທີຂອງມື້ນີ້. ສົ່ງຟອມພ້ອມກັບການຊຳລະເງິນ (ຖ້າວ່າມີ) ໃຫ້ແກ່ ກົມເກັບລາຍຮັບເມືອງພອດແລນ:

**ທີ່ຢູ່ທາງໄປສະນີ**: **Portland Revenue Division - Arts Tax, PO Box 2820, Portland OR 97208-2820**
ໂທລະສັບ: (503) 865-4278
ແຟກຊ໌: (503) 865-3065
TTY: (503) 823-6868
ທາງອອນລາຍ: Portland.gov/revenue/arts-tax
ທີ່ຢູ່ສະຖານທີ່: Revenue Division, 111 SW Columbia Street, Suite 600, Portland, Oregon, 97201

---

*ຈຳເປັນຕ້ອງໄດ້ມີການເປີດເຜີຍເລກປະກັນສັງຄົມຂອງທ່ານ. ຂໍ້ກຳນົດນີ້ໄດ້ຮັບອະນຸຍາດພາຍໃຕ້ກົດໝາຍຄວາມເປັນສ່ວນຕົວຂອງຣັຖບານກາງ ປີ 1974, ກົດໝາຍປະຕິຮູບພາສີ ປີ 1976 ແລະກົດລະບຽບການບໍລິຫານພາສີເພື່ອສິລະປະ. ກົມເກັບລາຍຮັບຈະນຳໃຊ້ເລກປະກັນສັງຄົມຂອງທ່ານ ເພື່ອຊ່ວຍໃນການບໍລິຫານຈັດການພາສີ Arts Tax ຊຶ່ງລວມເຖິງ, ແຕ່ບໍ່ຈຳກັດຢູ່ແຕ່, ການປະຕິບັດຕາມຂໍ້ກຳນົດໃນການຍື່ນພາສີຂອງຣັຖບານກາງ Form 1099 ແລະການປຽບທຽບການຍື່ນພາສີ Arts Tax ກັບຂໍ້ມູນຜູ້ຍື່ນພາສີຂອງຣັຖບານກາງ.*

---

[1] **ລາຍໄດ້ປະຈຳປີ** ການຍົກເວັ້ນຄວາມທຸກຍາກຈະປະຕິບັດຕາມຄຳນິຍາມຂອງຫ້ອງການສຳມະໂນຄົວແລະລວມເອົາທຸກລາຍໄດ້ທີ່ຫາມາໄດ້ ຫຼື ໄດ້ຮັບຈາກແຫຼ່ງອື່ນໆໃນປີ 2022, ໂດຍບໍ່ຄຳນຶງວ່ານັ້ນຈະຕ້ອງເສັຽພາສີຫຼືບໍ່ພາຍໃຕ້ກົດໝາຍຣັຖຫຼືຣັຖບານກາງ. ຕົວຢ່າງລວມມີ ດອກເບັ້ຍບັນຊີຝາກປະຢັດສ່ວນບຸກຄົນຫຼືຮ່ວມກັນ ຫຼື ດອກເບັ້ຍບັນຊີອື່ນ, ເງິນຄ່າລ້ຽງລູກ, ເງິນຄ່າລ້ຽງດູເມັຽ, ເງິນຄົນພິການ (ລວມເຖິງ VA), ເງິນຄົນຫວ່າງງານ, ເງິນຂາຍຫຸ້ນ ແລະຊັບສິນອື່ນໆ (ແມ້ແຕ່ວ່າໄດ້ຂາຍຂາດທຶນ), ເງິນບັນຜົນ, ເງິນປະກັນສັງຄົມ (ເສັຽພາສີຫຼືບໍ່ເສັຽພາສີ), ໃບຮັບລວມຈາກທຸລະກິດ ແລະຄ່າຈ້າງທີ່ເປັນລູກຈ້າງ.

[2] **ຄົນໃນຄົວເຮືອນ** ລວມມີຄົນທີ່ຢູ່ທັງໝົດ (ຜູ້ໃຫຍ່ ແລະເດັກ) ພາຍໃນບ່ອນຢູ່ອາໄສ ຊຶ່ງເປັນຜູ້ທີ່ຍື່ນເສັຽພາສີຂອງຣັຖ ຫຼື ຣັຖບານກາງແບບຄົນດຽວ.

[3] **ລາຍໄດ້ທີ່ຕ້ອງເສັຽພາສີ** ສາມາດໄດ້ມາຈາກຄ່າຈ້າງ, ທຸລະກິດສ່ວນຕົວ, ການລົງທຶນ (ບໍ່ລວມດອກເບັ້ຍພັນທະບັດສະຫະຣັຖ), ຄ່າເຊົ່າ, ເງິນບຳນານ (ບໍ່ລວມເງິນປະກັນສັງຄົມ, ຜົນປະໂຫຍດກົດໝາຍການບຳນານການທາງຣົຖໄຟຂອງຣັຖບານກາງ, Oregon PERS, FERS, ແລະ CSRS), ເງິນຊ່ວຍຜູ້ພິການ (ບໍ່ລວມເງິນຊ່ວຍ VA), ເງິນຊ່ວຍຄົນຫວ່າງງານ, ເງິນລ້ຽງດູຄູ່ສົມລົດ/ລ້ຽງດູລູກ, ຫຼື ແຫຼ່ງເງິນອື່ນໆ ທີ່ທາງເມືອງສາມາດເກັບພາສີໄດ້.